# ຈາກນະຄອນຄຸນໝິງເຖິງ ສປປ ລາວ, ພວກເຂົາເຈົ້າໄດ້ຮ່ວມກັນ ປຶກສາຫາລືກ່ຽວກັບການຮ່ວມມືດ້ານອາຊີວະສຶກສາ



ຫວ່າງມໍ່ໆມານີ້, ຊຸດສຳມະນາສຳລັບຄູອາຈານຈາກໂຮງຮຽນເຕັກນິກວິຊາຊີບ ສປປ ລາວ ທີ່ຈັດໂດຍກະຊວງການຄ້າຈີນ ແລະ ຮັບຈັດໂດຍສູນແລກປ່ຽນເສດຖະກິດ ແລະ ເຕັກນິກສາກົນຢຸນນານ ໄດ້ສຳເລັດລົງຢ່າງຈົບງາມ. ເຈົ້າໜ້າທີ່ລັດຖະບານ, ຜູ້ບໍລິຫານໂຮງຮຽນ ແລະ ຄູສອນ 30 ທ່ານ ທີ່ມາຈາກຂະແໜງການອາຊີວະສຶກສາຂອງລາວ ໄດ້ລົງໄປຢ້ຽມຢາມໂຮງຮຽນວິຊາຊີບ ແລະ ໂຮງງານວິສາຫະກິດ ຢູ່ແຂວງຢຸນນານ ແລະ ນະຄອນເຊີນເຈີ້ນແຂວງກວາງຕຸ້ງ,ເພື່ອຕິດຕາມສະພາບການພັດທະນາອາຊີວະສຶກສາຂອງຈີນ ໃນດ້ານການເຊື່ອມໂຍງການຜະລິດ ແລະ ການສຶກສາ, ການຮ່ວມມືລະຫວ່າງໂຮງຮຽນ ແລະ ວິສາຫະກິດ ແລະ ໄດ້ດຳເນີນການແລກປ່ຽນຢ່າງເລິກເຊິ່ງກ່ຽວກັບວິທີການຊຸກຍູ້ຄວາມທັນສະໄໝໃນດ້ານອາຊີວະສຶກສາຂອງລາວ ແລະ ລົງເລິກການຮ່ວມມືດ້ານອາຊີວະສຶກສາລະຫວ່າງ ລາວ-ຈີນ.

### ເສັ້ນທາງຫັນເປັນທັນສະໄໝຂອງອາຊີວະສຶກສາຢູ່ໃສ?

ທ່ານ ປອ ສີໄພວັນ ພິມມະສອນ ຮອງຜູ້ອຳນວຍການວິທະຍາໄລເຕັກນິກວິຊາຊີບແຂວງຄຳມ່ວນ ໄດ້ຖາມວ່າ: ຍ້ອນຫຍັງ ຈີນໄດ້ຄົ້ນພົບເສັ້ນທາງທີ່ມີສີສັນພິເສດຂອງຕົນໃນການຫັນເປັນທັນສະໄໝໃນໄລຍະສັ້ນ?

ໃນການຝຶກອົບຮົມ, ການພັດທະນາແບບພ້ອມພຽງຮຽງໜ້າກັນຂອງຈີນ ນັ້ນກໍຄື ເສັ້ນທາງການສົ່ງເສີມການຫັນເປັນອຸດສາຫະກຳແບບໃໝ່, ການຫັນເປັນຂໍ້ມູນຂ່າວສານ, ການຫັນເປັນຕົວເມືອງ ແລະ ການຫັນເປັນທັນສະໄໝໃນດ້ານກະສິກຳຢ່າງພ້ອມພຽງຮຽງໜ້າກັນ ໄດ້ສ້າງແຮງບັນດານໃຈຢ່າງເລິກເຊິ່ງໃຫ້ແກ່ ທ່ານ ສີໄພວັນ ພິມມະສອນ. ໃນເວລາທີ່ທ່ານໄປຢ້ຽມຢາມວິທະຍາໄລເຕັກນິກວິຊາຊີບແຫ່ງໜຶ່ງຂອງຈີນ, ທ່ານໄດ້ພົບເຫັນວ່າ: ນັກສຶກສາຂະແໜງວິຊາການຜະລິດອັດສະລິຍະສາມາດຄວບຄຸມສາຍການຜະລິດຂອງໂຮງງານຂອງທາງໂຮງຮຽນໄດ້ຈາກທາງໄກໂດຍຜ່ານເຕັກນິກ AI ແລະ IOT , "ນີ້ບໍ່ພຽງແຕ່ເປັນການສະແດງໃຫ້ເຫັນເຖິງຮູບແບບການບຳລຸງສ້າງດ້ວຍ 'ການຮ່ວມມືລະຫວ່າງໂຮງຮຽນ ແລະ ວິສາຫະກິດ' ຢ່າງມີຊີວິດຊີວາເທົ່ານັ້ນ, ຫາກຍັງໄດ້ສະແດງໃຫ້ເຫັນເຖິງການພັດທະນາແບບ 'ພ້ອມພຽງຮຽງໜ້າກັນ' ລະຫວ່າງຂໍ້ມູນຂ່າວສານ ແລະ ອຸດສາຫະກຳ ເຊິ່ງໄດ້ນຳເອົານະວັດຕະກຳມາໃຫ້ແກ່ພາລະກິດການສຶກສາ."

ສ່ວນ ນາງ ພູທອງ ວົງພານຄຳ, ຄູສອນຈາກວິທະຍາໄລເຕັກນິກສັບພະວິຊາລາວ ໄດ້ມີຄວາມສົນໃຈກ່ຽວກັບເຕັກໂນໂລຊີ ວ່າຈະຖືກນຳໃຊ້ເຂົ້າໃນຫ້ອງຮຽນໄດ້ແນວໃດ. ລາວມີຄວາມປະທັບໃຈຫຼາຍຕໍ່ວິທີການສອນທີ່ເນັ້ນໃສ່ "ເຕັກໂນໂລຊີ + ການປະຕິບັດຕົວຈິງ" ໃນຂົງເຂດອາຊີວະສຶກສາຂອງຈີນ ຄື: ເຕັກນິກ AI ຊ່ວຍຄູສອນໃນການວາງແຜນການສອນ; ການສອນທິດສະດີກອມແຕ່ສ່ວນໜ້ອຍເທົ່ານັ້ນ, ສ່ວນການປະຕິບັດຕົວຈິງຈະແມ່ນຈຸດສຳຄັນ. ຕົວຢ່າງ, ນັກຮຽນຂະແໜງວິຊາສ້ອມແປງລົດແມ່ນໄດ້ລົງມືປະຕິບັດຕົວຈິງຢູ່ໃນໂຮງງານ, ໂດຍມີຜູ້ຊ່ຽວຊານທີ່ມີປະສົບການຕິດຕາມຊີ້ນຳຕະຫຼອດ; ນັກຮຽນຍັງສາມາດຄົ້ນຄວ້າພັດທະນາຜະລິດຕະພັນສ້າງສັນດ້ານວັດທະນະທຳດ້ວຍຕົນເອງ, ເຊິ່ງບໍ່ພຽງແຕ່ເພີ່ມລາຍໄດ້ໃຫ້ແກ່ຕົນເອງເທົ່ານັ້ນ ຫາກຍັງສາມາດສະສົມປະສົບການໄປພ້ອມອີກດ້ວຍ.

ນັກການສຶກສາທັງສອງທ່ານລ້ວນແຕ່ເຫັນວ່າ, ຈຸດສຳຄັນຂອງອາຊີວະສຶກສາຂອງລາວໃນປັດຈຸບັນ ແມ່ນການຊຸກຍູ້ການປະຕິຮູບຫຼັກສູດ ແລະ ເພີ່ມທະວີການຮ່ວມມືລະຫວ່າງໂຮງຮຽນກັບວິສາຫະກິດ. ທ່ານ ສີໄພວັນ ກ່າວວ່າ: ຮູບແບບການເຊື່ອມໂຍງລະຫວ່າງການຜະລິດ ແລະ ການສຶກສາຈະຊ່ວຍໃຫ້ຊາວໜຸ່ມລາວຈຳນວນຫຼວງຫຼາຍສາມາດຮຽນຮູ້ທັກສະທີ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ, ແລະ ຍັງຈະເພີ່ມພະລັງຂັບເຄື່ອນໃຫ້ແກ່ການສ້າງສາພັດທະນາປະເທດລາວໃຫ້ທັນສະໄໝ. ສ່ວນ ນາງ ພູທອງ ວົງພານຄຳ ເຫັນວ່າ, ຮູບແບບການສອນແບບ "ເຕັກໂນໂລຊີ + ການປະຕິບັດຕົວຈິງ" ທີ່ມີປະສິດທິພາບສູງ, ຈະເປັນຜົນດີຕໍ່ການບຳລຸງສ້າງນັກຮຽນເຕັກນິກວິຊາຊີບໃຫ້ມີມາດຕະຖານສາກົນ ແລະ ສາມາດຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດ.

### "ຫວັງວ່າຈະສາມາດສ້າງບຸກຄະລາກອນການລົດໄຟໃຫ້ໄດ້ຫຼາຍກວ່າເກົ່າ"

ໃນບັນດານັກສຳມະນາກອນ, ທ່ານ ຄຳພຸດ ໄຊຍະຄຸນທອງ, ຄູສອນຈາກວິທະຍາໄລເຕັກນິກ-ວິຊາຊີບ ການລົດໄຟລາວ ມີປະສົບການທີ່ພິເສດ. ລາວໄດ້ຖືກຄັດເລືອກໃຫ້ເປັນຄູສອນຄົນໜຶ່ງທີ່ໄດ້ຮັບການສະໜັບສະໜູນຈາກໂຄງການຊ່ວຍເຫຼືອຂອງຈີນຕໍ່ວິທະຍາໄລເຕັກນິກວິຊາຊີບການລົດໄຟລາວ ເພື່ອໄປສຶກສາຢູ່ວິທະຍາໄລເຕັກນິກວິຊາຊີບທາງລົດໄຟຄຸນໝິງ. ປະສົບການແບບນີ້ບໍ່ພຽງແຕ່ໄດ້ຊ່ວຍໃຫ້ທ່ານມີຄວາມຊຳນານໃນດ້ານວິຊາຊີບທາງລົດໄຟເທົ່ານັ້ນ, ແຕ່ຍັງຊ່ວຍໃຫ້ລາວສາມາດຜ່ານການສອບເສັງລະດັບພາສາຈີນ, ເຊິ່ງເປັນພື້ນຖານທີ່ສຳຄັນສຳລັບການປະຕິບັດໜ້າທີ່ວຽກງານຂອງຕົນໃນອະນາຄົດ.

ປັດຈຸບັນ, ທ່ານ ຄຳພຸດ ໄດ້ສອນຮ່ວມກັບຄູສອນຄົນຈີນຈາກວິທະຍາໄລເຕັກນິກວິຊາຊີບທາງລົດໄຟຄຸນໝິງ. ທ່ານຈະປຶກສາຫາລືກັບໝູ່ເພື່ອນຮ່ວມງານຈີນ ເພື່ອຮ່ວມກັນມ້າງອຸປະສັກທາງດ້ານພາສາ ແລະ ແກ້ໄຂຄວາມຫຍຸ້ງຍາກໃນການເຂົ້າໃຈຄຳສັບວິຊາການໃນການສອນເທື່ອລະກ້າວ.

"ພາຍຫຼັງທີ່ທາງລົດໄຟ ລາວ-ຈີນ ໄດ້ເປີດການນຳໃຊ້ແລ້ວ, ໂອກາດປະກອບອາຊີບສຳລັບຊາວໜຸ່ມລາວໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ." ທ່ານ ຄຳພຸດ ກ່າວວ່າ, ນັກຮຽນຂອງທ່ານ ທີ່ມາຈາກເຂດພູດອຍຂອງແຂວງຫົວພັນ, ໄດ້ມີເປົ້າໝາຍເຮັດວຽກຢ່າງຈະແຈ້ງຍ້ອນການເປີດນຳໃຊ້ທາງລົດໄຟ ລາວ-ຈີນ, ປັດຈຸບັນ, ລາວໄດ້ກາຍເປັນນັກຮຽນດີເດັ່ນທີ່ມີຄວາມຮູ້ທາງດ້ານທິດສະດີ ແລະ ຄວາມສາມາດໃນພາກປະຕິບັດຕົວຈິງ. ທ່ານ ຄຳພຸດ ໄດ້ເຫັນນັກຮຽນລາວເກີດມີການປ່ຽນແປງຍ້ອນທາງລົດໄຟສາຍນີ້ ແລະ ຍິ່ງເຮັດໃຫ້ລາວມີຄວາມໝັ້ນໃຈຕໍ່ພາລະກິດຂອງຕົນວ່າ: "ພວກເຮົາຫວັງວ່າຈະສາມາດສ້າງບຸກຄະລາກອນທາງລົດໄຟໃຫ້ຫຼາຍຂຶ້ນກວ່າເກົ່າ, ເພື່ອຊຸກຍູ້ການພັດທະນາທາງລົດໄຟຂອງລາວໃຫ້ກ້າວຂຶ້ນສູ່ລະດັບໃໝ່ຕື່ມອີກ."





### ນັກຮຽນອາຊີວະສຶກສາຈະຮຽນໃຫ້ປະສົບຜົນສຳເລັດໄດ້ແນວໃດ?

ໃນການຝຶກອົບຮົມ, ການຈັດຕັ້ງປະຕິບັດນະໂຍບາຍອາຊີວະສຶກສາ, ການຄຸ້ມຄອງການສອນ ແລະ ການພັດທະນາຫຼັກສູດ, ການສ້າງຖັນແຖວຄູອາຈານ ໄດ້ກາຍເປັນຫົວຂໍ້ຈຸດສຸມທີ່ບັນດານັກການສຶກສາດ້ານອາຊີວະສຶກສາລາວ-ຈີນ ໃຫ້ຄວາມສົນໃຈຢ່າງກວ້າງຂວາງ. ການແລກປ່ຽນ ແລະ ປຶກສາຫາລືແບບເຊິ່ງໜ້າກັນ ໄດ້ເຮັດໃຫ້ຜູ້ເຂົ້າຮ່ວມຊຸດຝຶກອົບຮົມຈາກຝ່າຍລາວ ມີຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ການພັດທະນາອາຊີວະສຶກສາຂອງຈີນ.

ດ້ວຍຄວາມຄິດທີ່ວ່າ "ພວກເຮົາຈະເສີມສ້າງຄວາມເຂັ້ມແຂງໃນການສອນ ແລະ ການຮຽນຮູ້ຂອງນັກສຶກສາໄດ້ແນວໃດ?", ທ່ານ ອ່ອດຄຳ ພົມເຮືອງສີ, ຫົວໜ້າພະແນກວິຊາການ ວິທະຍາໄລເຕັກນິກ-ວິຊາຊີບ ຫຼວງພະບາງ, ໄດ້ພົບເຫັນຄວາມເປັນໄປໄດ້ໃນການລົງເລິກການຮ່ວມມືໃນຫຼາຍລະດັບກັບຝ່າຍຈີນ ໃນເວລາທ່ານແລກປ່ຽນກັບເພື່ອນຮ່ວມງານຝ່າຍຈີນ.

ທ່ານ ອ່ອດຄຳ ສະເໜີວ່າ: ສອງຝ່າຍ ລາວ-ຈີນ ສາມາດຮ່ວມກັນພັດທະນາຫຼັກສູດຝຶກອົບຮົມ, ພັດທະນາລະບົບການສຶກສາແບບດິຈິຕອນ, ຄົ້ນຄວ້າຮູບແບບການບຳລຸງສ້າງຮ່ວມກັນແບບ "2+2" ແລະ "2+1" ເປັນຕົ້ນ. ທ່ານຊີ້ໃຫ້ເຫັນວ່າ, ຂົງເຂດກະສິກຳ, ການຄຸ້ມຄອງໂຮງແຮມ ແລະ ການທ່ອງທ່ຽວ ແມ່ນຂົງເຂດທີ່ຈີນມີທ່າແຮງ, ຍິນດີຕ້ອນຮັບອົງການຈັດຕັ້ງທີ່ກ່ຽວຂ້ອງຂອງຈີນມາທັດສະນະສຶກສາຢູ່ລາວ, ເພື່ອຂຸດຄົ້ນຄວາມສາມາດບົ່ມຊ້ອນດ້ານການຮ່ວມມືຫຼາຍກວ່າເກົ່າ.

ຄວາມຄິດດັ່ງກ່າວພໍດີສອດຄ່ອງກັບຄວາມຄາດຫວັງຂອງນາງ ພູທອງ ວົງພານຄຳ ທີ່ວ່າ: ຈະສືບຕໍ່ສ້າງຂົວຕໍ່ແຫ່ງການແລກປ່ຽນຄູສອນອາຊີວະສຶກສາລະຫວ່າງສອງປະເທດ. ທ່ານ ສີໄພວັນ ພິມມະສອນ ຍັງໄດ້ກ່າວອີກວ່າ, ການທັດສະນະສຶກສາຄັ້ງນີ້ໄດ້ຮັບຜົນສຳເລັດຢ່າງຫຼວງຫຼາຍ, ເຊິ່ງຈະຊຸກຍູ້ການຮ່ວມມືຕົວຈິງໃນຂົງເຂດຕ່າງໆລະຫວ່າງສອງຝ່າຍຢ່າງຕັ້ງໜ້າ, ແລະ ເພີ່ມກຳລັງຂັບເຄື່ອນໃໝ່ເຂົ້າໃນການຮ່ວມມືດ້ານອາຊີວະສຶກສາລະຫວ່າງສອງປະເທດລາວ-ຈີນ.

ການສົນທະນາດ້ານອາຊີວະສຶກສາທີ່ຂະຫຍາຍຈາກຫ້ອງຮຽນທີ່ນະຄອນຄຸນໝິງ, ກຳລັງເຊື່ອມໂຍງເຂົ້າໃນການຮ່ວມມືດ້ານອາຊີວະສຶກສາລະຫວ່າງລາວ-ຈີນ, ເຊິ່ງເປັນການປູເສັ້ນທາງທີ່ໝັ້ນຄົງກວ່າເກົ່າໃຫ້ການບຳລຸງສ້າງບຸກຄະລາກອນທີ່ມີສີມືດ້ານວິຊາຊີບ ແລະ ການພັດທະນາອຸດສາຫະກຳຂອງສອງປະເທດໃນອະນາຄົດ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com